# ອົງການແລະວຽກທີ່ເຂົາເຈົ້າ ເຮັດທົ່ວໂລກ

**ມີການ**ໃຊ້ຫລາຍແນວທາງເພື່ອຊີ້ນຳວຽກງານໃຫ້ຄຳພະຍານເຊິ່ງກຳລັງເຮັດຢູ່ຫລາຍກວ່າ 230 ດິນແດນ. ການຊີ້ນຳທັງຫມົດມາຈາກຄະນະກຳມະການປົກຄອງທີ່ສຳນັກງານໃຫຍ່ຢູ່ບຣຸກລິນ ນິວຢອກ. ທຸກປີ ຄະນະກຳມະການປົກຄອງໄດ້ສົ່ງຕົວແທນໄປອົງເຂດຕ່າງໆທົ່ວໂລກ ເພື່ອຫາລືກັບຜູ້ແທນສາຂາໃນອົງເຂດນັ້ນ. ໃນສຳນັກງານສາຂາມີຄະນະກຳມະການສາຂາປະມານ 3 ເຖິງ 7 ຄົນເພື່ອເອົາໃຈໃສ່ວຽກໃນເຂດທີ່ຕົນຮັບຜິດຊອບຢູ່. ບາງສາຂາມີໂຮງພິມ ສາຂາບາງບ່ອນກໍມີເຄື່ອງພິມປະເພດ “ໂຣຕາຣີ” ທີ່ມີຄວາມໄວສູງ. ມີການແບ່ງປະເທດຫລືພື້ນທີ່ແຕ່ລະສາຂາຮັບຜິດຊອບອອກເປັນຫລາຍພາກ ແລ້ວພາກຕ່າງໆຈະແບ່ງເປັນຫລາຍຫມວດ. ແຕ່ລະຫມວດມີປະມານ 20 ປະຊາຄົມ. ຜູ້ດູແລພາກຈະຫມູນວຽນໄປຢາມຫມວດຕ່າງໆໃນພາກຂອງເຂົາເຈົ້າ. ແຕ່ລະຫມວດຈະຈັດການປະຊຸມໃຫຍ່ປີລະ 2 ເທື່ອ. ນອກຈາກນັ້ນ ຍັງມີຜູ້ດູແລຫມວດ ເຊິ່ງຈະຢາມແຕ່ລະປະຊາຄົມໃນຫມວດຂອງລາວປີລະສອງເທື່ອເປັນປະຈຳ ເພື່ອຊ່ວຍເຫລົ່າພະຍານໃນການຈັດລະບຽບແລະເຮັດວຽກການປະກາດໃນເຂດທີ່ປະຊາຄົມນັ້ນໄດ້ຮັບມອບຫມາຍ.

ປະຊາຄົມທ້ອງຖິ່ນກັບຫໍປະຊຸມເປັນສູນກາງໃນການບອກຂ່າວດີໃນຊຸມຊົນຂອງເຈົ້າ. ມີການແບ່ງພື້ນທີ່ເຊິ່ງຢູ່ໃນການຮັບຜິດຊອບຂອງປະຊາຄົມອອກເປັນເຂດນ້ອຍໆ. ມີການມອບເຂດໃຫ້ພະຍານທີ່ພະຍາຍາມໄປຢາມແລະເວົ້າລົມກັບກັບຜູ້ຄົນທຸກເຮືອນໃນເຂດນັ້ນ. ແຕ່ລະປະຊາຄົມມີພະຍານຈຳນວນບໍ່ຈັກຄົນຈົນຮອດ 200 ຄົນ ມີຜູ້ເຖົ້າແກ່ທີ່ໄດ້ຮັບມອບຫມາຍໃຫ້ເບິ່ງແຍງວຽກງານຕ່າງໆ. ຜູ້ປະກາດຂ່າວດີທຸກຄົນມີຄວາມສຳຄັນຕໍ່ອົງການຂອງພະຍານພະເຢໂຫວາ. ພະຍານທຸກຄົນ ບໍ່ວ່າເຂົາເຈົ້າຈະຮັບໃຊ້ໃນສຳນັກງານໃຫຍ່, ໃນສຳນັກງານສາຂາ, ຫລືໃນປະຊາຄົມ ຕ່າງກໍເຮັດວຽກການບອກຄົນອື່ນເປັນສ່ວນຕົວກ່ຽວກັບລາຊະອານາຈັກຂອງພະເຈົ້າ.

ໃນທີ່ສຸດ ລາຍງານກ່ຽວກັບວຽກງານນີ້ຈະຖືກສົ່ງເຂົ້າສຳນັກງານໃຫຍ່ເພື່ອຮຽບຮຽງແລະຈັດພິມລົງໃນປຶ້ມ*ປະຈຳປີ* (ພາສາອັງກິດ). ປຶ້ມນີ້ມີລາຍງານຢ່າງລະອຽດກ່ຽວກັບສິ່ງທີ່ເຮັດສຳເລັດແລ້ວໃນແຕ່ລະປີຂອງການໃຫ້ຄຳພະຍານເລື່ອງພະເຢໂຫວາແລະລາຊະອານາຈັກຂອງພະອົງທີ່ພະເຍຊູຄລິດເປັນກະສັດ. ບໍ່ຈັກປີມານີ້ ພະຍານແລະຜູ້ສົນໃຈປະມານ 17.000.000 ຄົນ ໄດ້ເຂົ້າຮ່ວມການປະຊຸມອະນຸສອນທີ່ຈັດຂຶ້ນເປັນປະຈຳທຸກໆປີເພື່ອລະນຶກເຖິງການຕາຍຂອງພະເຍຊູ.







ພະຍານພະເຢໂຫວາໃຊ້ເວລາຫລາຍກວ່າ 1.000.000.000 ຊົ່ວໂມງຕໍ່ປີເພື່ອປະກາດຂ່າວດີ ແລະຄົນໃຫມ່ຫລາຍກວ່າ 300.000 ຄົນຮັບບັບເຕມາ. ຍອດລວມຂອງປຶ້ມຕ່າງໆທີ່ແຈກຈ່າຍອອກໄປມີຫລາຍຮ້ອຍລ້ານຫົວ.

